| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສ້າງຕັ້ງສໍານັກພິມ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoICT-PD-12 | 30.10.2017 | ກົມພິມຈໍາໜ່າຍ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | J - ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ສໍານັກພິມ ມີສິດໃນການສ້າງ ແລະ ກໍານົດໂຄງເນື້ອໃນຂອງປື້ມ ຫຼື ງານພິມຕ່າງໆ ທີ່ຈະໄດ້ເຜີຍແຜ່ໃຫ້ສາທາລະນະ ຈຶ່ງມີຄວາມຈໍາເປັນຕ້ອງຮັບປະກັນ ຄຸນະສົມບັດ, ຄວາມອາດສາມາດ ແລະ ຄຸ້ມຄອງສໍານັກພິມດັ່ງກ່າວ ໃຫ້ດໍາເນີນການສ້າງ ແລະ ກໍານົດເນື້ອໃນທີ່ເໝາະສົມ ແລະ ບໍ່ຂັດກັບກົດໝາຍ ແລະ ຄວາມສະຫງົບຮຽບຮ້ອຍ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງສ້າງຕັ້ງ ສໍານັກພິມ ຊຶ່ງໝາຍເຖິງ ອົງການຈັດພິມ ຄື ການທ້ອນໂຮມເອົາຜົນງານໃນການປະດິດຄິດແຕ່ງ, ຮູບຖ່າຍ ຫລື ຮູບແຕ້ມ ມາກວດແກ້, ຮຽບຮຽງແລ້ວ ຈັດເປັນຕົ້ນສະບັບສົມບູນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ | 30 | |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ** | | |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ທີ່ໄດ້ມາດຕະຖານ. 2. ມີສໍານັກງານ, ພາຫະນະ, ອຸປະກອນເຕັກນິກ, ທຶນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ. 3. ມີຜູ້ອໍານວຍການ ຫຼື ຮອງຜູ້ອໍານວຍການ, ຫົວໜ້າຄະນະບັນນາທິການ ແລະ ບັນນາທິການ ຕ້ອງມີໃບຢັ້ງຢືນການອົບຮົມການຈັດພິມ ຫຼື ປະກາສະນີຍະບັດຊັ້ນສູງຂຶ້ນໄປ ດ້ານການຈັດພິມ, ມີພູມລໍາເນົາຖາວອນ ຢູ່ ສປປ ລາວ, ຖືສັນຊາດລາວ ແລະ ມີອາຍຸ 21 ປີຂຶ້ນໄປ, ຮູ້ພາສາຕ່າງປະເທດໃດໜຶ່ງ ໃນລະດັບທີ່ແນ່ນອນ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກໍານົດ ທີ່ໄດ້ກໍານົດໄວ້ພາຍໃຕ້ກົດໝາຍ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ຍື່ນຄໍາຮ້ອງຂໍຕໍ່, ບົດລາຍງານການດໍາເນີນທຸລະກິດໃນປີທີ່ຜ່ານມາ ແລະ ໃບອະນຸຍາດໍາເນີນທຸລະກິດສໍານັກພິມ ສະບັບແທ້ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 100000.00 | 10000.00 | 110000.00 |
| **ຄໍາເຫັນ** | ຕາມທີ່ກໍານົດໄວ້ໃນລັດຖະບັນຍັດ 03, ມາດຕາ 51. | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມ ຄໍາຮ້ອງ** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ຂໍຕໍ່ອາຍຸ ຫລືບໍ່?** | | | **ຄຳຮ້ອງ** | |
| ແມ່ນແລ້ວ | 0.00 | 100000.00 | 10000.00 | 110000.00 |
| **ຄຳເຫັນ** | ຕາມທີ່ກຳນົດໄວ້ໃນລັດຖະບັນຍັດ 03, ມາດຕາ 51. | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ການພິມຈຳໜ່າຍ | 05/ສພຊ | 09.12.2008 | ພາກທີ III ການຈັດຕັ້ງ ແລະ ການເຄື່ອນໄຫວຂອງການພິມຈຳໜ່າຍ ໝວດທີ 1 ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກພິມ (ມາດຕາ 26 - ມາດຕາ 41) |
| ແຈ້ງການ ເລື້ອງ: ການຈົດທະບຽນສ້າງຕັ້ງສຳນັກພິມ ຢູ່ໃນ ສປປ ລາວ | 781/ຫກ | 25.02.2009 | |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ກົດລະບຽບວິສາຫະກິດ |
| ໃບຢັ້ງຢືນວຸດທິການສຶກສາ |
| ໃບຊີວະປະຫວັດຂອງຜູ້ອຳນວຍການ |
| ບົດວິພາກເສດຖະກິດເຕັກນິກ |
| ໂຄງຮ່າງການຈັດຕັ້ງຂອງວິສາຫະກິດ |
| ໃບແຈ້ງໂທດ |
| ຮູບຖ່າຍຂອງອຳນວຍການ |
| ແຜນວາດທີ່ຕັ້ງຂອງວິສາຫະກິດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 2 | 0 |